# ເອກະສານກ່ຽວກັບການບໍ່ມີຄ່າທຳນຽມເພີ່ມສຳລັບບັດ EBT – ການຝາກເງິນເຂົ້າບັນຊີໂດຍກົງ

ທ່ານສາມາດຮັບເອົາ cash aid ຂອງທ່ານໄດ້ຜ່ານ EBT ຫຼື ການຝາກເງິນເຂົ້າບັນຊີໂດຍກົງ; ທ່ານເລືອກໄດ້! ບອກພະນັກງານປະຈຳຄາວຕີ້ຂອງທ່ານ ວ່າທ່ານຕ້ອງການຮັບ cash aid ຂອງທ່ານດ້ວຍວິທີໃດ.

ທ່ານສາມາດປ່ຽນຈາກ EBT ໄປເປັນການຝາກເງິນເຂົ້າບັນຊີໂດຍກົງໄດ້ ຫຼືປ່ຽນຈາກການຝາກເງິນເຂົ້າບັນຊີໂດຍກົງໄປເປັນ EBT ເມື່ອໃດກໍຕາມທີ່ທ່ານຕ້ອງການ. ບອກພະນັກງານປະຈຳຄາວຕີ້ຂອງທ່ານ ແລະເຂົາເຈົ້າຈະໃຫ້ຄຳແນະນຳແກ່ທ່ານ. ຖ້າວ່າ ທ່ານບໍ່ສາມາດໃຊ້ບັດ EBT ຫຼື ພາກສ່ວນໃດໆ ຂອງລະບົບ EBT ເນື່ອງຈາກຄວາມພິການ, ມີຂໍ້ຈຳກັດທາງພາສາ ເຂົ້າເຖິງບໍ່ໄດ້, ຫຼື ອຸປະສັກອື່ນໆ, ຈົ່ງບອກພະນັກງານປະຈຳຄາວຕີ້ຂອງທ່ານ ແລະເຂົາເຈົ້າຈະພິຈາລະນາວ່າ ທ່ານມີຄຸນສົມບັດຫຼືບໍ່ທີ່ຈະຮັບການຊ່ວຍເຫຼືອ cash aid ຂອງທ່ານດ້ວຍວິທີອື່ນ.

ຖ້າວ່າ ທ່ານໄດ້ຮັບ cash aid ຂອງທ່ານໃນວັນທີສອງ ຫຼື ສາມຂອງເດືອນ, ທ່ານອາດສາມາດຮັບເອົາ cash aid ຂອງທ່ານໄດ້ໃນວັນທີໜຶ່ງຂອງເດືອນ, ຖ້າວ່າ ທ່ານມີຄວາມຫຍຸ້ງຍາກ. ບອກພະນັກງານຄາວຕີ້ຂອງທ່ານວ່າ ເປັນຫຍັງທ່ານຈຶ່ງຕ້ອງການຮັບ cash aid ຂອງທ່ານໃນວັນທີໜຶ່ງຂອງເດືອນ. ຖ້າວ່າ ທ່ານຮັບເອົາ cash aid ຂອງທ່ານໂດຍການຝາກເຂົ້າບັນຊີໂດຍກົງ, ທ່ານຈະໄດ້ຮັບການຊ່ວຍເຫຼືອດ້ານເງິນສົດຂອງທ່ານໃນວັນທີ ໜຶ່ງຂອງເດືອນສະເໝີ.

ຖ້າວ່າ ເງິນສົດໃນບັດ EBT ຂອງທ່ານຖືກຖອນອອກໄປ ຈາກບັນຊີຂອງທ່ານເນື່ອງຈາກມີການລັກເງິນທາງ ອີເລັກໂຕຣນິກ ແລະໃນຕອນນັ້ນ ບັດ EBT ກໍຍັງຢູ່ນຳທ່ານ, ຂໍໃຫ້ໂທຣແຈ້ງ (877) 328-9677 ເພື່ອຍົກເລີກບັດ EBT ຂອງທ່ານທັນທີ ແລະຕິດຕໍ່ກັບພະນັກງານປະຈຳຄາວຕີ້ຂອງທ່ານ. ອາດມີການທົດແທນເງິນຄືນໃຫ້ ຖ້າວ່າ ມີເງື່ອນໄຂບາງຢ່າງກົງຕາມຂໍ້ກຳນົດ.

ຈື່ໄວ້ວ່າ: ເງິນຊ່ວຍເຫຼືອ CalFresh ແມ່ນອອກໃຫ້ ຜ່ານບັດ EBT ຂອງທ່ານສະເໝີ ແລະຈະບໍ່ມີການຄິດໄລ່ຄ່າທຳນຽມ ກັບທ່ານ ເມື່ອໃຊ້ເງິນ CalFresh ໃນການຊື້.

ຂ້າງລຸ່ມນີ້ ແມ່ນຂໍ້ມູນກ່ຽວກັບ EBT ແລະການຝາກເງິນເຂົ້າບັນຊີໂດຍກົງ ເພື່ອຊ່ວຍທ່ານເລືອກວ່າ ວິທີໃດທີ່ທ່ານຕ້ອງການຮັບ cash aid ຂອງທ່ານ.

## ຖ້າວ່າ ທ່ານເລືອກ EBT

ທ່ານສາມາດຮັບເງິນສົດໄດ້ໂດຍການຖອນຈາກ ATMs ແລະໂດຍການຂໍເອົາເງິນສົດກັບຄືນໃນເວລາທ່ານຈ່າຍຊື້ຂອງ.

ທ່ານສາມາດຖອນເງິນສົດໄດ້ສີ່ຄັ້ງຕໍ່ເດືອນທີ່ຕູ້ ATMs ທີ່ມີສັນຍາລັກ MoneyPass **ໂດຍບໍ່ເສຍຄ່າທຳນຽມ**. ຫຼັງຈາກຖອນສີ່ຄັ້ງແລ້ວໃນໜຶ່ງເດືອນ, ຕໍ່ໄປ ການຖອນ ATM ຈະເສຍຄ່າທຳນຽມ 80 ເຊັນ. ຊອກເບິ່ງຕູ້ ATMs ຂອງ MoneyPass ທີ່ບໍ່ເສຍຄ່າທຳນຽມ ທີ່ www.moneypass.com. ການຂໍເປັນເງິນສົດກັບຄືນເມື່ອທ່ານຈ່າຍຊື້ຂອງອາດບໍ່ເສຍຄ່າທຳນຽມ, ຂໍໃຫ້ຖາມກັບຮ້ານຄ້າ.

ຕູ້ ATMs ທີ່ບໍ່ມີສັນຍະລັກ MoneyPass ສາມາດຄິດຄ່າທຳນຽມກັບທ່ານ $4 ຫຼື ຫຼາຍກວ່ານັ້ນສຳລັບ ການຖອນເງິນແຕ່ລະຄັ້ງ. ຄ່າທຳນຽມເຫຼົ່ານີ້ເພີ່ມຂຶ້ນຢ່າງໄວວາ.

ຖ້າວ່າ ບໍ່ມີຕູ້ ATM ທີ່ມີສັນຍະລັກ MoneyPass ຢູ່ໃກ້ທ່ານ, ຂໍໃຫ້ຊອກເບິ່ງຕູ້ ATMs ອື່ນໆ ທີ່ຈະບໍ່ຄິດຄ່າທຳນຽມກັບທ່ານ. ເບິ່ງທີ່ເວັບໄຊ www.ebtproject.ca.gov/Library/Cash_Access.pdf ເພື່ອເບິ່ງລາຍຊື່ **ຕູ້ ATMs ທີ່ບໍ່ຄິດຄ່າທຳນຽມ.**

ຖ້າວ່າ ທ່ານເຮັດບັດ EBT ເສຍ ຫຼື ມີຄົນລັກບັດຂອງທ່ານ, ຂໍໃຫ້ໂທຣແຈ້ງພະແນກບໍລິການລູກຄ້າທີ່ເບີໂທຣ (877) 328-9677 ***ທັນທີ***. ຕົວແທນພະແນກບໍລິການລູກຄ້າຈະ ຍົກເລີກບັດ EBT ຂອງທ່ານ ແລະຊ່ວຍທ່ານຂໍເອົາບັດໃໝ່. ຖ້າວ່າ ເງິນຊ່ວຍເຫຼືອຖືກຖອນອອກໂດຍຜູ້ອື່ນກ່ອນທີ່ທ່ານ ຈະໂທຣແຈ້ງພະແນກບໍລິການລູກຄ້າ, ຈະບໍ່ມີການທົດແທນຄືນເງິນຊ່ວຍເຫຼືອຂອງທ່ານນັ້ນ.

ລະບົບ EBT ຈະບັນທຶກບ່ອນທີ່ທ່ານນຳໃຊ້ບັດຂອງທ່ານ ໃນການຖອນເງິນສົດ ແລະຈ່າຍເພື່ອຊື້ຂອງ, ແຕ່ມັນຈະບໍ່ບັນທຶກວ່າ ທ່ານຊື້ຫຍັງແດ່. ທ່ານສາມາດກວດກາຄືນການໃຊ້ບັດຂອງທ່ານໄດ້ໂດຍການ ໂທຣໄປທີ່ເບີໂທຣ (877) 328-9677 ຫຼືເພື່ອກວດກາເບິ່ງບັນຊີ EBT ຂອງທ່ານ, ກວດເບິ່ງທາງອອນລາຍທີ່ເວັບໄຊສຳລັບລູກຄ້າ EBT. ສ້າງຊື່ຜູ້ໃຊ້ແລະລະຫັດຜ່ານທີ່ www.ebt.ca.gov/caebtclient/clientcreate.recip.

## ຖ້າວ່າ ທ່ານເລືອກການຝາກເງິນເຂົ້າບັນຊີໂດຍກົງ

ທ່ານສາມາດຮັບເງິນສົດໄດ້ໂດຍການຖອນທີ່ຕູ້ ATMs ຂອງທະນາຄານຂອງທ່ານ ແລະໂດຍການຂໍຮັບເປັນເງິນສົດກັບຄືນໃນເວລາຈ່າຍຊື້ຂອງ.

ທ່ານອາດຖອນເງິນສົດໄດ້ໂດຍບໍ່**ເສຍຄ່າທຳນຽມ**ທີ່ຕູ້ ATMs ຂອງທະນາຄານຂອງທ່ານ; ສອບຖາມກັບທະນາຄານຂອງທ່ານ. ການຂໍຮັບເປັນເງິນສົດໃນເວລາທ່ານຈ່າຍເງິນຊື້ຂອງ ອາດບໍ່**ເສຍຄ່າທຳນຽມ,** ໃຫ້ກວດເບິ່ງກັບຮ້ານຄ້າ.

ຕູ້ ATMs ທີ່ບໍ່ແມ່ນທະນາຄານຂອງທ່ານ ສາມາດຄິດໄລ່ຄ່າທຳນຽມ $4 ຫຼືຫຼາຍກ່ວານັ້ນ ສຳລັບການຖອນແຕ່ລະຄັ້ງ ບວກກັບຄ່າທຳນຽມຕ່າງໆທີ່ທະນາຄານຂອງທ່ານອາດຄິດໄລ່ເຊັ່ນກັນ. ຄ່າທຳນຽມເຫຼົ່ານີ້ເພີ່ມຂຶ້ນຢ່າງໄວວາ.

ທ່ານສາມາດຊອກເບິ່ງຕູ້ ATMs ຂອງທະນາຄານຂອງທ່ານໄດ້ ໂດຍການ ໂທຣຫາພະແນກບໍລິການລູກຄ້າຂອງທະນາຄານ ຂອງທ່ານ, ເບິ່ງທີ່ເວັບໄຊຂອງທະນາຄານ ຫຼື ໂດຍການດາວໂຫລດໂປຣແກຣມຂອງທະນາຄານລົງໃນ ໂທຣະສັບຂອງທ່ານ.

ຖ້າວ່າ ທ່ານເຮັດບັດ ATM ຂອງທ່ານເສຍ ຫຼື ມີຄົນລັກບັດຂອງທ່ານ, ຂໍໃຫ້ໂທຣຫາທະນາຄານ***ທັນທີ***. ທະນາຄານຂອງທ່ານຈະຍົກເລີກບັດຂອງທ່ານ ແລະສົ່ງບັດໃໝ່ໃຫ້ທ່ານ. ຖ້າວ່າ ມີຄົນລັກບັດ ແລະໃຊ້ບັດຂອງທ່ານ, ທ່ານອາດສູນເສຍເງິນບາງສ່ວນ ຫຼືທັງໝົດ. ຈົ່ງຕິດຕໍ່ທະນາຄານຂອງທ່ານເພື່ອຊອກເບິ່ງຂໍ້ມູນຕື່ມ.

ທະນາຄານຂອງທ່ານຈະບັນທຶກບ່ອນທີ່ທ່ານໃຊ້ບັດ ATM ຂອງທ່ານເພື່ອຖອນເງິນສົດ ແລະຈ່າຍເພື່ອຊື້ຂອງ. ທ່ານສາມາດກວດເບິ່ງການໃຊ້ບັດຂອງທ່ານໄດ້ໃນ ໃບລາຍງານບັນຊີປະຈຳເດືອນຂອງທ່ານ, ໂດຍການເບິ່ງທີ່ເວັບໄຊຂອງທະນາຄານຂອງທ່ານ ຫຼື ໂດຍການໂທຫາພະແນກບໍລິການລູກຄ້າຂອງທະນາຄານ.

**ກະລຸນາຢ່າລືມເກັບຮັກສາບັດ ATM ຂອງທ່ານ ແລະບັດ EBT ຂອງທ່ານໄວ້ໃຫ້ປອດໄພ ແລະຢ່າເອົາລະຫັດບັດ (PIN) ຂອງທ່ານໃຫ້ຜູ້ອື່ນ.**